# ຕລອດຊີວິດ

( ອ່ານພຣະທັມ ມາລາກີ 2:13-16 )

---

"ແມ່ນເຈົ້າໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າວ່າຈະສັດຊື່ຕໍ່ນາງກໍດີ ພຣະເຈົ້າຊົງເຮັດໃຫ້ເຈົ້າກັບນາງເປັນເນື້ອກາຍແລະຈິດໃຈອັນດຽວກັນບໍ່ແມ່ນຫຼື? ພຣະອົງມີເຈດຕະນາກ່ຽວກັບເຣື່ອງນີ້ເພາະຫຽັງ? ເພາະຢາກໃຫ້ພວກເຮົາມີລູກຫຼານທີ່ເປັນໄພ່ພົນຂອງພຣະເຈົ້າທີ່ແທ້ຈິງ. ສະນັ້ນ, ຈົ່ງລະວັງຕົວໃຫ້ດີ ຢ່າໃຫ້ໃຜລະເມີດຄຳສັນຍາທີ່ໄດ້ເຮັດໄວ້ກັບເມັຽຄາວແຕ່ງງານກັນທຳອິດ" ( ມາລາກີ 2:5 )

---

ການສຶກສາຄົ້ນຄວ້າຈາກສາມມະຫາວິທະຍາລັຍທາງຝັ່ງຕາເວັນຕົກຂອງສະຫະຣັດອະເມຣິກາໄດ້ພົບວ່າ ຄູ່ຜົວເມັຽທີ່ຮ່ວມຊີວິດດ້ວຍກັນຍິ່ງດົນເທົ່າໃດ ຍິ່ງມີຄວາມສຸກຫຼາຍຂຶ້ນ. ຈາກການຄົ້ນຄວ້າແລະຈາກການລາຍງານຂອງວາຣະສານລາຍເດືອນ "ນິວສ໌ເດຣ໌" ບໍ່ໄດ້ກ່າວເຊັ່ນນັ້ນ. ແຕ່ໄດ້ກ່າວວ່າ "ເວລາເປັນສິ່ງສຳຄັນ ສາມາດເຮັດໃຫ້ຄູ່ແຕ່ງງານທີ່ບໍ່ຄ່ອຍລາບລື້ນ ມີຄວາມລາບລື້ນຂຶ້ນ." ແຕ່ຖ້ອຍຄຳນີ້ກໍເປັນການສນັບ ສນູນໃນທາງທິສະດີທີ່ກ່າວວ່າ "ການປັບປຸງຊີວິດການແຕ່ງງານ ຕ້ອງໃຊ້ເວລາ" ອີງຕາມຄຳກ່າວຂອງສາສນາຈານ ໂຣເບີດ ລີເວນເຊີນ ທີ່ມະຫາວິທະຍາລັຍເບີກເຄລີ, ຣັດຄາລີຟໍເນັຽ ເພິ່ນກ່າວວ່າ "ຄູ່ແຕ່ງງານທີ່ຢູ່ ກິນດ້ວຍກັນ ໄດ້ພັດທະນາໄປສູ່ຂັ້ນທີ່ວ່າບໍ່ຢາກໃຫ້ຄວາມຮັກທີ່ມີຕໍ່ກັນໄກໄປຈາກສາຍຕາ, ໄກໄປຈາກຄວາມສັມພັນທີ່ມີຕໍ່ກັນ, ແລະໄກໄປຈາກທ່າທີທີ່ສາມາດສະແດງອອກຕໍ່ກັນແລະກັນ."

ໃນພຣະທັມມາລາກີ 2:14-16 ອົງພຣະຜູ້ເປັນເຈົ້າຊົງເຕືອນຫ້າມເຣື່ອງການເສັຽຄຳສັນຍາໃນການແຕ່ງງານ. ແຕ່ບາງສັງຄົມຊ້ຳຜັດສນັບສນູນ, ສົ່ງເສີມ, ຊຸກຍູ້ໃຫ້ປະຮ້າງກັນ ໂດຍອ້າງອີງຕາມຫຼັກການທີ່ວ່າ ເປັນຄູ່ທີ່ບໍ່ເໝາະສົມກັນແລະເປັນຄູ່ແຕ່ງງານທີ່ບໍ່ມີຄວາມສຸກ. ແຕ່ຖ້າຫາກເຮົາອ່ານເບິ່ງໃນພຣະທັມມາລາກີ ເຮົາຈະພົບວ່າ "ແມ່ນເຈົ້າໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າວ່າຈະສັດຊື່ຕໍ່ນາງກໍດີ ພຣະເຈົ້າຊົງເຮັດໃຫ້ເຈົ້າກັບນາງເປັນເນື້ອກາຍແລະຈິດໃຈອັນດຽວກັນບໍ່ແມ່ນຫຼື? ພຣະອົງມີເຈດຕະນາກ່ຽວກັບເຣື່ອງນີ້ເພາະຫຽັງ? ກໍເພາະຢາກໃຫ້ພວກເຮົາມີລູກຫຼານທີ່ເປັນໄພ່ພົນຂອງພຣະເຈົ້າທີ່ແທ້ຈິງ. ສະນັ້ນ, ຈົ່ງລະວັງຕົວໃຫ້ດີ ຢ່າໃຫ້ໃຜລະເມີດຄຳສັນຍາທີ່ໄດ້ເຮັດໄວ້ກັບເມັຽຄາວແຕ່ງງານກັນທຳອິດ" ( ມາລາກີ 2:16 )

ເມື່ອເຮົາມີຄວາມຮູ້ສຶກວ່າຢາກປະຮ້າງກັນ ໃຫ້ເຮົາລະນຶກເຖິງພຣະຄຳຂອງອົງພຣະຜູ້ເປັນເຈົ້າທີ່ຊົງກ່າວໄວ້. ການແຕ່ງງານທີ່ຕລອດຮອດຝັ່ງນັ້ນຈຳເປັນຕ້ອງປະຕິບັດຕໍ່ກັນແລະກັນ, ອົດທົນຕໍ່ກັນແລະກັນ. ອະທິຖານຮ່ວມກັນ, ຮັບການຫນູນນ້ຳໃຈຈາກເພື່ອນຄຣິສຕຽນ, ຫຼືຜູ້ໃຫ້ຄຳປຶກສາທີ່ສລາດສຮ້ຽມແຫຼມ (ທີ່ເປັນຄຣິສຕຽນ ). ເມື່ອເຮົາຫາກປະເຊີນກັບບັນຫາອັນຍາກລຳບາກໃນຊີວິດການແຕ່ງງານ ພຣະຜູ້ເປັນເຈົ້າມີ ພຣະປະສົງໃຫ້ເຮົາທຳຄວາມສະອາດ ( ຊຳຣະລ້າງ ) ພາຍໃນເຮືອນຂອງເຮົາໃໝ່, ບໍ່ແມ່ນເຜົາມັນດ້ວຍໄຟ. ໃນຖານະທີ່ເຮົາສແວງຫາການຄືນດີກັນໃໝ່, ປົ່ວແປງຊີວິດການແຕ່ງງານໃໝ່, ເຮົາເອງຕ້ອງເປັນຜູ້ອານຸລັກ ຮັກສາຄວາມສັມພັນອັນດີງາມທີ່ມີຕໍ່ກັນແລະກັນໄວ້ .

---

"ຄູ່ແຕ່ງງານທີ່ດີ ຕ້ອງຕັດສິນໃຈວ່າ ຈະແຕ່ງງານເພື່ອການດີ"

---

ຮຽບຮຽງຈາກ ອາວເດລີເບຣດ